*ສະບາຍດີ ທຸກທ່ານ*

*ມື້ນີ້ຈະຂໍນໍາເອົາ ສານຂອງ ສົມເດັດພຣະສັງຄະຣາດລາວ ຂຽນເມື່ອວັນທີ່ ໒໔ ມິຖຸນາ 25໒໔ ເຖິງພີ່ນ້ອງຊາວ ລາວອົພຍົບທີ່ພັດພາກຈາກບ້ານເກີດ ເມືອງນອນມາຢູ່ຕ່າງແດນ ມາເຜີຍແຜ່ໃຫ້ທ່ານໄດ້ອ່ານ ຫຼືໄດ້ອ່ານອີກ ເພື່ອ ທົບທວນຄວາມຊົງຈໍາ ເພາະເປັນສານທີ່ມີຄວາມໝາຍເລິກຊຶ້ງ ຈັບອົກ ຈັບໃຈ ແລະມີຄະຕິເຕືອນໃຈເປັນພິເສດ ແມ່ນວ່າ ມື້ນັ້ນຮອດມື້ນີ້ ວັນເວລາ ຈະຜ່ານພົ້ນມາ ໒໔ ປີແລ້ວກໍດີ ແຕ່ລັກສນະຂອງຄວາມເວົ້າຂອງສົມເດັດ ຍັງເປັນປັດຈຸບັນ ບໍ່ມີສິ່ງໃດທຽມທັນ ເຮັດໃຫ້ພວກເຮົາມີສະຕິແລະມີກໍາລັງ ໃຈຢ່າງແປກປລາດ ດັ່ງຕໍ່ໄປນີ້ ະ*

ໂຮງພຍາບານສົງ ກຸງເທບ ປະເທດໄທຍ໌

ຂໍຈະເຣີນເມດຕາ ມາຍັງພີ່ນ້ອງລູກຫຼານລາວທຸກໆທ່ານ

ອາຕມາຮູ້ສຶກເປັນຫ່ວງ ຄຶດເຖິງລູກຫຼານລາວທຸກຄົນທີ່ໄດ້ພັດພາກຈາກຮົ້ວ ສວນໄຮ່ນາ ບ້ານເກີດເມືອງນອນອັນເປັນທີ່ຮັກແລະຫວງແຫນຂອງຕົນ ທັງນີ້ກໍເພື່ອຄວາມຢູ່ລອດຂອງ ແຕ່ລະຄົນ ການຈໍາໃຈຈໍາພາກຈາກບ້ານ ເກີດເມືອງນອນທີ່ລູກຫຼານເຄີຍຢູ່ແລະສ້າງສົມມາ ເປັນສິ່ງທີ່ທຸກຄົນເຂົ້າ ໃຈຊາບຊຶ້ງດີ ບ້ານເກີດເມືອງນອນແລະຜືນແຜ່ນດິນທຸກຕະຣາງນີ້ວ ເປັນສົມບັດສ່ວນຣວມທີ່ບັນພະບຸຣຸດເຮົາໄດ້ສ້າງໄວ້ ຊຶ່ງພວກເຮົາທຸກຄົນ ມີໜ້າທີ່ຮ່ວມກັນ ປົກປັກຮັກສາສົມບັດນັ້ນ ເພື່ອສືບຕໍ່ເຈຕນາຣົມຂອງ ທ່ານໄວ້ ເພື່ອລູກຫຼານຂອງເຮົາ ຜູ້ເກີດມາສຸດທ້າຍພາຍຫຼັງຈະໄດ້ຊ່ອຍ ກັນສືບສ້າງໃຫ້ຈະເຣີນຮຸ່ງເຮືອງຕໍ່ໄປ ເປັນການສະແດງກະຕັນຍູ ກະຕະເວທີ ຕໍ່ວິນຍານຂອງຜູ້ທີ່ມີຄຸນແກ່ບ້ານເມືອງ ອັນເປັນການກະທໍາ ທີ່ທາງພຸທສາສນາຍົກຍ້ອງສັຣເສີນ

ເວລານີ້ບ້ານເມືອງຂອງພວກເຮົາໄດ້ມີການປ່ຽນແປງ ໃນວິຖີຊີວິດ ທີ່ພວກເຮົາເຄີຍດໍາເນີນມາ ຈຶ່ງເປັນເຫດໃຫ້ລູກຫຼານໄດ້ຍ້າຍແຍກໜີມາ ຢູ່ຕ່າງຖິ່ນຕ່າງແດນ ຜົວເມັຽພັດພາກກັນ ລູກພັດພາກຈາກພໍ່ແມ່ ຍາດພີ່ນ້ອງແຕກກະຈາຍຍ້າຍອອກໄປຢູ່ຄົນລະທິດລະທາງ ບາງຄົນ ບາງພວກກໍລົ້ມຫາຍຕາຍໄປ ໃນຣະຫວ່າງເດີນທາງໜີອອກຈາກບ້ານ ເກີດເມືອງນອນຂອງຕົນ ເມື່ອໄດ້ພົບເຫັນສະພາບຕົວຈິງຈາກລູກຫຼານ ຜູ້ອົພຍົບຫລົບໄພ ໜີມາຢູ່ຕາມສູນຕ່າງໆແລ້ວ ເປັນຕາໜ້າສລົດສັງເວດ ສຸດແສນຈະພັຣນາໄດ້

ລູກຫຼານທີ່ຮັກແພງທັງຫຼາຍ ທີ່ໄດ້ອົພຍົບມາຢູ່ປະເທດທີສາມ ຖ້າພໍຕັ້ງຕົວ ທັນໃຈໄດ້ ກໍຂໍໃຫ້ພາກັນທວນຣະລຶກນຶກເຖິງ ເພື່ອນຮ່ວມຊາດທີ່ຍັງຕົກທຸກໄດ້ ຍາກ ເນື່ອງຈາກຄວາມປ່ຽນແປງອັນເກີດຂຶ້ນໃນບ້ານເມືອງ ສົມຄວນທີ່ ພວກເຮົາທຸກຄົນທຸກຄອບຄົວ ທຸກສະມາຄົມທີ່ມີຖານະພໍສົມຄວນ ຈະໄດ້ ສະແດງຄວາມເຫັນໃຈ ຄວາມຮັກແພງ ຄວາມອິດູກູນາເມດຕາສົງສານ ຊ່ອຍເຫຼືອຊຶ່ງກັນແລະກັນຕາມສົມຄວນແກ່ຖານະຂອງຕົນ

ອາຕມາຮູ້ສືກເປັນຫ່ວງແລະຄຶດເຖິງລູກຫຼານທຸກຄົນ  ຢາກຈະມາຢ້ຽມຢາມ ດ້ວຍຕົນເອງ
ແຕ່ສະພາບການບໍ່ອຳນວຍ  ຈຶ່ງຂໍຝາກຄວາມຄຶດຮອດຄຶດເຖິງ ແລະແຜ່ເມດຕາທັມ
ມາຍັງພີ່ນ້ອງລູກຫຼານທຸກໆຄົນ ຂໍໃຫ້ພາກັນຕັ້ງໃຈສ້າງ ຊີວິດໃໝ່ດ້ວຍຄວາມເຊື່ອໝັ້ນ
ແລະດຳເນີນໄປດ້ວຍຄວາມສະດວກສະບາຍ ເພື່ອໃຫ້ມີພື້ນຖານອັນໝັ້ນຄົງ
ຂໍໃຫ້ຮັກແພງກັນ ສາມັກຄີກັນໃຫ້ໝັ້ນໜຽວ ປະກອບພາຣະກິດໃດໆ
ໃຫ້ສຳເຣັດລຸລ່ວງສົມຄວາມມຸ່ງມາດປາຖນາ

ອາຕມາຊຣາເຖົ້າແກ່ ອາຍຸເຖິງ 89 ປີແລ້ວ  ແມ່ນປັດຈຸບັນນີ້ຈະມີສຸຂພາບດີ
ຂື້ນເປັນປົກກະຕິແລ້ວກໍຕາມ  ແຕ່ມື້ນຶ່ງຊຶ່ງຄົງເປັນເວລາບໍ່ເຫິງນານປານໃດ
ອາຕມາກໍຄົງໄດ້ຈາກພີ່ນ້ອງລູກຫຼານໄປຕາມກົດທັມມະດາຂອງສັງຂານບໍ່ມື້ ໃດກໍມື້ນຶ່ງ
ຈຶ່ງຂໍຝາກຄວາມຫວັງອັນເຕັມປ່ຽມ ໄວ້ກັບພີ່ນ້ອງລູກຫຼານ  ໄວ້ ກັບຜູ້ນຳໃນອົງການຈັດຕັ້ງ
ປະທານແລະຮອງປະທານສະມາຄົມ ຂອງຄົນ ລາວທຸກໆທ່ານ  ທີ່ຢູ່ທຸກໆປະເທດ
ໄດ້ຮ່ວມກັນເສັຽສລະປໂຍດສ່ວນໂຕ ເພື່ອສ່ວນຮວມ ແລະຫາຊ່ອງທາງຊ໊ດຊ່ອຍ ຊາວອົພຍົບ
ທີ່ຢູ່ຕາມສູນຕ່າງໆ ໃນປະເທດທີ່ສອງ ຊຶ່ງນັບວ່າແມ່ນບຸກຄົນທີ່ໜ້າສົງສານເປັນຢ່າງຍິ່ງ

ອາຕມາຂໍຝາກຄວາມຫວັງໄວ້ກັບລູກຫຼານລາວທຸກຖ້ວນໜ້າ  ຈົ່ງຮັກແພງ ສາມັກຄີກັນ  ຊ່ອຍ
ເຫຼືອເກື້ອກູນຊຶ່ງກັນແລະກັນບົນພື້ນຖານແຫ່ງຄວາມ ເມດຕາຈິດມິດທັມ ທີ່ຄົນລາວເຮົາມີ
ປະຈຳໄວ້ມາຕັ້ງແຕ່ບັນພະບູຣຸດ
ທ່ານໄດ້ວາງເປັນມໍຣະດົກໄວ້ໃຫ້ແກ່ກຸລບຸດລູກຫຼານລາວໄດ້ປະຕິບັດຕໍ່ເນື່ອງ ກັນໄປ
ຢ່າຢຸດຢັ້ງແລະທໍ້ຖອຍຈົນເຖິງວັນສິ້ນລົມປານຂອງພວກເຮົາພຸ້ນເທີ້ນ

ອາຕມາຂໍອາຣາທນາເອົາເດດອະນຸພາບ ຄຸນພຣະພຸທເຈົ້າ ຄຸນພຣະທັມມະເຈົ້າ
ແລະຄຸນພຣະສັງຄະເຈົ້າຕລອດເຖິງສິ່ງສັກສິດໃນພຣະຣາຊອານາຈັກລາວແລະ
ສາກົນຈັກກະວານ  ໂປດດົນບັນດານປົກປັກຮັກສາ ຄຸ້ມຄອງໃຫ້ພີ່ນ້ອງລູກຫຼານ
ລາວທຸກຄົນປະສົບພົບພໍ້ແຕ່ຄວາມສຸກຄວາມຈະເຣີນ  ປາສຈາກໂຣຄາພຍາດ ບຽດບຽນ
ມີຊີວິດກ້າວໜ້າແລະຮຸ່ງເຮືອງ  ໃຫ້ມີໂອກາດໄດ້ກັບຄືນບ້ານ ເກີດເມືອງນອນ ເພື່ອຊ່ອຍກັນ
ປົກປັກຮົກສາເຂດນ້ຳແດນດິນອັນເປັນຖິ່ນ ກຳເນີດຂອງພວກເຮົານັ້ນເທີ້ນ

ຈະເຣີນພອນດ້ວຍຄວາມເມດຕາທັມ
ພຣະຍອດແກ້ວພຸທທະຊິໂນຣົສສະກົລມະຫາສັງຄະປາໂມກຂ໌
ທັມມະຍານມະຫາເຖຣະ
ສົມເດັຈພຣະສັງຄະຣາຊແຫ່ງພຣະຣາຊອານາຈັກລາວ